PetroTrade
ບໍລິສັດ ປິໂຕຣລ້ຽມເທຣດດິ້ງລາວ ມະຫາຊົນ
PETROLEUM TRADING LAO PUBLIC COMPANY
ຖະໜົນ ກຳແພງເມືອງ, ບ້ານໂພນທັນ, ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ, ສ ປ ປ ລາວ ໂທ: 856 21 264834-5 ແຟັກ: 856021 264836
Kampheangmueng Rd, Phonthan Village, Xaysettha District, Vientiane Capital, Lao P.D.R, Tel: 856 21 264834-5, Fax: 856021 264836

ເລກທີ: 0 0 7 0/ປທລ/2023

ນະຄອນຫຼວງວຽງຈັນ, ວັນທີ: 12 ພຶດສະພາ 2023

**ຮຽນ:** ທ່ານ ຫົວໜ້າ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ
ທ່ານ ຜູ້ອຳນວຍການໃຫຍ່ ຕະຫຼາດຫຼັກຊັບລາວ
ບັນດາ ທ່ານ ຜູ້ຖືຮຸ້ນ ບໍລິສັດ ປິໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ

**ເລື່ອງ:** ເລື່ອນວັນທີຈັດກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2022

- ອີງຕາມໜັງສືແຈ້ງຈາກ ບໍລິສັດ Price Waterhouse Cooper (Lao) Sole Co., Ltd ("PwC") ສະບັບລົງວັນທີ 25 ເມສາ 2023.
- ອີງຕາມ ໜັງສືແຈ້ງເຊີນເຂົ້າຮ່ວມກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2022 ສະບັບເລກທີ 0017/ປທລ/2023, ລົງວັນທີ 05 ເມສາ 2023.
- ອີງຕາມ ໜັງສືແຈ້ງເລື່ອນກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2022 ສະບັບເລກທີ 197/ປທລ/2023, ລົງວັນທີ 25 ເມສາ 2023.
- ອີງຕາມ ໜັງສືແຈ້ງເລື່ອນກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2022 ສະບັບເລກທີ 0030/ປທລ/2023, ລົງວັນທີ 10 ພຶດສະພາ 2023.

ບໍລິສັດ ປິໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ ("ບໍລິສັດ" ຫຼື "ປທລ") ຂໍຖືເປັນກຽດແຈ້ງມາຍັງທ່ານເພື່ອຊາບວ່າ ບໍລິສັດ ຂໍເລື່ອນວັນທີຈັດກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2022 ຈາກວັນທີ 12 ພຶດສະພາ 2023 ເປັນ**ວັນທີ 25 ພຶດສະພາ 2023, ເວລາ 09:30 ໂມງ** (ເລີ່ມລົງທະບຽນເວລາ 08:00 ໂມງ), ທີ່ຫ້ອງປະຊຸມໃຫຍ່ ຊັ້ນ 8, ອາຄານ ຕະຫຼາດຫຼັກຊັບລາວ, ຖະໜົນ ກຳແພງເມືອງ ບ້ານ ໂພນທັນ, ເມືອງ ໄຊເສດຖາ, ນະຄອນຫຼວງວຽງຈັນ. ການເລື່ອນຈັດກອງ ປະຊຸມໃນຄັ້ງນີ້ ເນື່ອງຈາກເອກະສານບາງສ່ວນທີ່ສຳຄັນ (ເຊິ່ງແມ່ນເອກະສານຈາກພາຍນອກ) ທີ່ຢູ່ໃນຂັ້ນຕອນຂອງການເກັບ ຄືນ ແລະ ກວດສອບເອກະສານ ກ່ອນນຳສິ່ງໃຫ້ທາງກວດສອບພາຍນອກ.

ສະນັ້ນ, ທາງບໍລິສັດຈຶ່ງໄດ້ເຮັດໜັງສືສະບັບນີ້ ຂຶ້ນມາເພື່ອລົບລ້າງ ໜັງສືແຈ້ງເລື່ອນກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2022 ສະບັບເລກທີ 0029/ປທລ/2023, ລົງວັນທີ 10 ພຶດສະພາ 2023 (ສາເຫດຂອງການເລື່ອນທັງໝົດແມ່ນອີງໃສ່ໜັງສືສະບັບນີ້ເທົ່ານັ້ນ).

ດັ່ງນັ້ນ, ບໍລິສັດ ຈຶ່ງຂໍແຈ້ງມາຍັງທ່ານເພື່ອຊາບ.

ດ້ວຍຄວາມເຄົາລົບ ແລະ ນັບຖືເປັນຢ່າງສູງ,

ປະທານສະພາບໍລິຫານ

ບໍລິສັດ ປິໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ Petroleum Trading Lao Public Company

ດຳສອນ ສິດທິໄຊ